ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳ 06 ເດືອນຕົ້ນປີ 2020

I. ສະພາບລວມຂອງ ທຄຕລ

1. ວິໄສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: “ ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ”.

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ແລະ ກ້າວສູ່ມາດຕະຖານສາກົນ, ພາລະກິດທີ່ສຳຄັນຂອງ ທຄຕລ ມີຄື: ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງ ເນັ້ນການປັບປຸງທຸລະກິດທະນາຄານໃຫ້ແທດເໝາະກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງອັດທະນະທຳຄຸ້ມຄອງບໍລິຫານຄວາມສ່ຽງໃຫ້ເຂັ້ມແຂງ ແລະ ສອດ ຄ່ອງຕາມຫລັກການ Basel II, ຍົກສູງປະສິດທິພາບການດຳເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິ ຫານທີ່ມີສັກກາຍະພາບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ, ໄດ້ມາດຕະຖານສາກົນ ທາງດ້ານລະບົບລາຍງານ, ນຳໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

❖ ແຜນງານ ແລະ ໂຄງານ 2020

ໃນການສືບຕໍ່ຈັດຕັ້ງຜັນຂະຫຍາຍພາລະກິດໄລຍະຍາວ ທຄຕລ ເພື່ອຮອງຮັບໃນການປັບປຸງບໍລິການ ພັດທະນາ ລະ ບົບການຄຸ້ມຄອງບໍລິຫານ 2020 ບັນດາວຽກງານຕົ້ນຕໍແມ່ນຍັງສືບຕໍ່ແຜນງານ 6 ແຜນງານຫລັກ (ຮັກສາເດີມ); 29 ໂຄງ ການໃຫຍ່ ແຜນວຽກ. ປີນີ້ໄດ້ຮັບເອົາແຜນວຽກຍ່ອຍຂອງແຕ່ລະພາກສ່ວນເຂົ້າມາເພີ່ມຈຳນວນ 229 ແຜນວຽກ

ບັນດາໂຄງການຂອງແຕ່ລະແຜນງານມີຄື :

- ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ: 1 ໂຄງການ ແລະ ມີ 1 ແຜນວຽກ.
- ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ປະຕິບັດຫຼັກເກນ ບາເຊອ II ລວມມີ: 4 ໂຄງການ ແລະ ມີ 35 ແຜນວຽກ.
- ສ້າງລະບົບຂໍ້ມູນເພື່ອການບໍລິຫານ: 5 ໂຄງການ ມີ 43 ແຜນວຽກ.
- ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ ມີ: 5 ໂຄງການ ແລະ ມີ 17 ແຜນວຽກ.
- ການບໍລິຫານ ແລະ ພັດທະນາ ບຸກຄະລາກອນ ລວມມີ: 4 ໂຄງການ ແລະ ມີ 40 ແຜນວຽກ.

- ພັດທະນາການບໍລິຫານການເງິນ, ການບໍລິການທີ່ທັນສະໄໝ ແລະ ປະສິດທິພາບການດຳເນີນທຸລະກິດໃຫ້ສູງຂຶ້ນ : ມີ 10 ໂຄງການ ແລະ ມີ 93 ແຜນວຽກ.

II. ຖານະການເງິນ ແລະ ຜົນດຳເນີນງານ

1. ເສດຖະກິດມະຫາພາກ ສ ປ ປ ລາວ ແລະ ແນວໂນ້ມ ໃນປີ 2020

ສຳລັບປີ 2020, ເສດຖະກິດຂອງລາວຄາດວ່າຈະຂະຫຍາຍໂຕຊ້ຳລົງ ໃນລະດັບ 3,3%[1] ໂດຍຫຼຸດເປົ້າໝາຍທີ່ລັດຖະບານຄາດຄະເນໄວ້ໃນຕົ້ນປີທີ່ລະດັບ 6,5%, ເຊິ່ງສາເຫດກໍ່ຍ້ອນການແຜ່ລະບາດຂອງພະຍາດ COVID-19 ສົ່ງຜົນໃຫ້ການສ້າງລາຍຮັບຂອງຫົວໜ່ວຍທຸລະກິດຫຼາຍແຫ່ງອາດບໍ່ໄດ້ຕາມແຜນເນື່ອງຈາກບໍ່ສາມາດດຳເນີນທຸລະກິດໄດ້ເຕັມສ່ວນ ໂດຍສະເພາະທຸລະກິດທີ່ຕິດພັນກັບຂະແໜງບໍລິການ, ການສົ່ງອອກ, ການທ່ອງທ່ຽວ, ທີ່ພັກອາໄສ ແລະ ຮ້ານອາຫານ. ເຖິງຢ່າງໃດກໍ່ຕາມ, ເສດຖະກິດ ສປປ ລາວ ປະເມີນໂດຍ ອົງການ IMF ຄາດວ່າຈະຂະຫຍາຍໂຕພຽງ 0,7% ແລະ ທະນາຄານໂລກຄາດຄະເນການຂະໂຕຂອງເສດຖະກິດລາວ 1% ເຊິ່ງຖ້າສະຖານະການຍັງບໍ່ຜ່ອນຄາຍເສດຖະກິດລາວອາດຈະຖົດຖອຍເຖິງ -1,8%[2].

ເພື່ອເປັນການຫຼຸດຜ່ອນຜົນກະທົບຂອງພະຍາດ COVID-19 ຕໍ່ລະບົບເສດຖະກິດ ແລະ ສັງຄົມໃນ ສປປ ລາວ, ລັດຖະບານໄດ້ກຳນົດນະໂຍບາຍ ແລະ ມາດຕະການເສດຖະກິດ[3] ເຊັ່ນ: ການຍົກເວັ້ນການເກັບອາກອນເງິນເດືອນຂອງຜູ້ອອກແຮງງານ ທີ່ມີລາຍໄດ້ 5 ລ້ານກີບລົງມາເປັນເວລາ 3 ເດືອນ; ການເລື່ອນເວລາໃນການແຈ້ງ & ຊຳລະອາກອນ; ຍົກເວັ້ນອາກອນລາຍໄດ້ໃຫ້ຈຸນລະວິສາຫະກິດ; ແຈ້ງການເລື່ອນການຊຳລະຄ່າທຳນຽມທາງ; ການເລື່ອນຈ່າຍໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງທີ່ເປັນໂຄງການໃຫຍ່ໃນແຜນການລົງທຶນ ປີ 2020; ນອກຈາກນັ້ນ, ລັດຖະບານຍັງໄດ້ກຳນົດນະໂຍບາຍເງິນຕາ ເຊັ່ນ: 1) ໃຫ້ ທະນາຄານທຸລະກິດ ແລະ ສະຖາບັນການເງິນເລື່ອນເວລາຊຳລະໜີ້ຕົ້ນທຶນ ແລະ ດອກເບ້ຍ, ປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມລູກໜີ້, 2) ສະໜອງເງິນກູ້ບ້ວງໃໝ່ໃຫ້ລູກໜີ້ ແລະ ຜູ້ທີ່ໄດ້ຮັບຜົນກະທົບ ເຊິ່ງທະນາຄານທີ່ປະຕິບັດມາດຕະການດັ່ງກ່າວຈະໄດ້ຮັບນະໂຍບາຍຜ່ອນຜັນການປະຕິບັດລະບຽບການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນ; 3) ນະໂຍບາຍຫຼຸດອັດຕາດອກເບ້ຍນະໂຍບາຍພື້ນຖານ 1% ແລະ ຫຼຸດອັດຕາເງິນແຮຝາກບັງຄັບ 1% ສຳລັບເງິນກີບ, 2% ສຳລັບເງິນຕາຕ່າງປະເທດ.

---

[1] ອີງຕາມບົດລາຍງານຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ສະບັບເລກທີ 005/ສຄສຊ ນະຄອນຫຼວງວຽງຈັນ 19/04/2020

[2] ບົດລາຍງານຂອງທະນາຄານໂລກ https://www.worldbank.org/en/country/lao/publication/covid-19-to-impact-lao-pdr-growth-debt-in-2020-new-world-bank-report

[3] ຂໍ້ຕົກລົງວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19 ສະບັບເລກທີ 31/ນຍ ລົງວັນທີ 02.04.2020

[3] ບົດລາຍງານຂອງທະນາຄານໂລກ https://www.worldbank.org/en/country/lao/publication/covid-19-to-impact-lao-pdr-growth-debt-in-2020-new-world-bank-report

[3] ອີງໃສ່ບົດປະເມີນສະພາບເສດຖະກິດມະຫາພາກຂອງ ສປປ ລາວ 6 ເດືອນຕົ້ນປີ 2020 ໃນໄລຍະການແຜ່ລະບາດຂອງພະຍາດ COVID-19

ນອກຈາກນະໂຍບາຍທີ່ກ່າວມາຂ້າງເທິງແລ້ວ, ລັດຖະບານຍັງໄດ້ກຳນົດມາດຕະການຜ່ອນຄາຍອອກເປັນແຕ່ລະໄລຍະ ເພື່ອເຮັດໃຫ້ສະພາບເສດຖະກິດມີການຟື້ນໂຕເທື່ອລະກ້າວ, ເຊິ່ງແນວໂນ້ມການລະບາດຂອງພະຍາດໂຄວິດ-19 ໃນ ສປປ ລາວ ມີທ່າອ່ຽງຫຼຸດລົງ ແລະ ສາມາດຄວບຄຸມໄດ້. ເຖິງຢ່າງໃດກໍ່ຕາມ, ການຂະຫຍາຍໂຕຂອງເສດຖະກິດໝົດປີ 2020 ຍັງມີຄວາມບອບບາງ ແລະ ມີປັດໄຈສ່ຽງຫຼາຍດ້ານ[4]ເປັນຕົ້ນແມ່ນ ສະພາບເສດຖະກິດພາກພື້ນ ແລະ ສາກົນຍັງສືບຕໍ່ຂະຫຍາຍໂຕຊ້າລົງ, ການຂາດດຸນການຄ້າຂອງລາວ, ລະດັບຄັງສຳຮອງເງິນຕາຕ່າງປະເທດທີ່ຕ່ຳ, ອັດຕາການວ່າງງານທີ່ເພີ່ມສູງ, ການເໜັງຕີງຂອງອັດຕາແລກປ່ຽນ ໂດຍເງິນກີບ ແລະ ອັດຕາເງິນເຟີ້ທີ່ສູງຂຶ້ນ.

2. ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ສຳເລັດການເປີດເຜີຍເອກະສານລາຍງານການເງິນ ທຄຕລ ປະຈຳປີ 2019 ແລະ ປະຈຳໄຕມາດ 01/2020 ຜ່ານລະບົບເປີດເຜີຍຂອງຕະຫຼາດຫຼັກຊັບລາວ. ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ປະຈຳປີ 2019 ຈຳນວນ 1 ຄັ້ງ; ຈັດກອງປະຊຸມສະພາບໍລິຫານ ທຄຕລ 6 ຄັ້ງ; ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 ຈຳນວນ 1 ຄັ້ງ ແລະ ສຳເລັດການຈ່າຍເງິນປັນຜົນປະຈຳປີ 2019 ຈຳນວນ 813 ກີບ/ຮຸ້ນ ໃຫ້ຂາຮຸ້ນ ທຄຕລ.

ທຄຕລ ຮ່ວມມືກັບ ກົມພາສີ ກະຊວງການເງິນ ເປີດການໃຊ້ລະບົບການຊຳລະຄ່າອາກອນມູນຄ່າເພີ່ມ ຂອງຜູ້ໂດຍສານຂາເຂົ້າ, ລະບົບເກັບຄ່າທຳນຽມ ແລະ ຜູ້ໂດຍສານຂາຂົ້າ-ອອກ ແບບເອເລັກໂຕຼນິກ (Smart VAT 2); ເປີດໂຕການໃຫ້ບໍລິການໂອນເງິນຂ້າມທະນາຄານຢ່າງເປັນທາງການຜ່ານແອັບມືຖືລະຫວ່າງ ທຄຕລ ແລະ BIC, ເຊັນສັນຍາການຮ່ວມມືລະຫວ່າງ ບໍລິສັດ ສະຕາຟິນເທັກ ຈຳກັດຜູ້ດຽວ ແລະ ທຄຕລ ວ່າດ້ວຍການບໍລິການ E-Commerce. ພ້ອມນັ້ນ, ຍັງສຳເລັດການພັດທະນາ 2 ຝັງເຊິນໃນ BCEL One ຄື: FastTrack ຝັງເຊິນ FastCash ເຮັດໃຫ້ການຖອນເງິນໄວຂຶ້ນ ເພື່ອຫຼຸດຜ່ອນການລໍຖ້າຄິວດົນ ແລະ OneCash ທີ່ໃຊ້ໄວ້ສົ່ງບິງເງິນໃຫ້ແກ່ບຸກຄົນອື່ນ ໂດຍບຸກຄົນນັ້ນບໍ່ຈຳເປັນຕ້ອງມີບັນຊີເງິນຝາກ ຫຼື ເປັນລູກຄ້າຂອງ ທຄຕລ ແລະ ໄດ້ຈັດງານຖະແຫຼງຂ່າວການຍົກລະດັບຜະລິດຕະພັນ ການບໍລິການຂອງ ທຄຕລ ຢ່າງເປັນທາງການ ເຊິ່ງປະກອບມີ: BCEL OneCash, BCEL OneCare, QR Withdrawal BCEL i-Bank Version 4 ແລະ ໃນທ້າຍໄຕມາດ 02/2020 ທຄຕລ ໄດ້ຂະຫຍາຍຕາໜ່າງການໃຫ້ບໍລິການໃໝ່ “ ໜ່ວຍບໍລິການຫ້ວຍນ້ຳເຢັນ’’ ຂຶ້ນກັບສາຂາດົງໂດກ.

ນອກຈາກນັ້ນ, ທຄຕລ ໄດ້ສ້າງຕັ້ງຄະນະຮັບຜິດຊອບວຽກງານທີ່ຕິດພັນກັບການແຜ່ລະບາດເຊື້ອຈຸລະໂຣກສາຍພັນໃໝ່ COVID-19 ຂອງ ທຄຕລ ເພື່ອຮັບມືໃນການປ້ອງກັນພະຍາດ ແລະ ຄົ້ນຄວ້າຜົນກະທົບຕ່າງໆໃນຊ່ວງລະບາດຂອງພະຍາດດັ່ງກ່າວເພື່ອລາຍງານຄະນະບໍລິຫານງານ ແລະ ຂັ້ນເທິງຮັບຊາບເປັນແຕ່ລະໄລຍະ.

3. ຂໍ້ມູນການທາງດ້ານການເງິນທີ່ສຳຄັນຂອງ ທຄຕລ

ໃນ 06 ເດືອນຕົ້ນປີ 2020 ທຄຕລ ໄດ້ດຳເນີນທຸລະກິດຕາມແຜນການທີ່ໄດ້ຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ຊຶ່ງມີຕົວເລກປະຕິບັດຕາມບັນຊີ ທຄຕລ ດັ່ງນີ້:

- **ຍອດຊັບສິນ/ໜີ້ສິນ:** 49.668,15 ຕື້ກີບ ທຽບໃສ່ແຜນການປີ 2020 ປະຕິບັດໄດ້ 100% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 16%;

[4] ອີງໃສ່ບົດປະເມີນສະພາບເສດຖະກິດມະຫາພາກຂອງ ສປປ ລາວ 6 ເດືອນຕົ້ນປີ 2020 ໃນໄລຍະການແຜ່ລະບາດຂອງພະຍາດ COVID-19

- **ຍອດເງິນກູ້ທັງໝົດ:** 28.212,56 ຕື້ກີບ ທຽບໃສ່ແຜນການປີ 2020 ປະຕິບັດໄດ້ 99% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 8% (ໃນນັ້ນ, ໜີ້ NPL ມີຈຳນວນ 827,54 ຕື້ກີບ ກວມ 2,93% ຂອງຍອດສິນເຊື່ອທັງໝົດ);
- **ຍອດເງິນຝາກ:** 43.820,40 ຕື້ກີບ ທຽບໃສ່ແຜນການປີປະຕິບັດໄດ້ 102%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 21%;
- **ທຶນທັງໝົດ:** 2.013,63 ຕື້ກີບ ທຽບໃສ່ແຜນການປີ 2020 ປະຕິບັດໄດ້ 78%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເທົ່າ 100%;
- **ກຳໄລກ່ອນອາກອນ:** 74,55 ຕື້ກີບ ທຽບໃສ່ແຜນການປີ 2020 ປະຕິບັດໄດ້ 21%.

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 30 ມິຖຸນາ 2020 ທະນາຄານມີ (1) ສຳນັກງານໃຫຍ່, (1) ບໍລິສັດໃນເຄືອ, (5) ບໍລິສັດຮ່ວມທຶນ, (20) ສາຂາຫລັກ, (94) ໜ່ວຍບໍລິການ ແລະ (15) ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

- **ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ**
    - ເບີໂທ (+856-21) 213200 ຫຼື ໂທ 1555
    - ແຟັກ (+856-21) 213202
    - ອີເມວ: bcelhqv@bcel.com.la
    - ເວັບໄຊ: www.bcel.com.la
- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະບານເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຍຸດທະສາດ ຊື່ວ່າທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ເຊັນອະນຸມັດໃຫ້ທະນາຄານປັບປຸງໂຄງສ້າງຜູ້ຖືຮຸ້ນໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜຸນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອຜັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ພ້ອມດຽວກັນນັ້ນໃນວັນທີ 29 ພະຈິກ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60% ຮຸ້ນ, ນັກລົງທຶນພາຍໃນ (ລວມທັງ ພະນັກ ງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 30% ແລະ ຄູ່ຮ່ວມຍຸດທະສາດ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການ ຊຳລະສະສາງ, ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 30 ມິຖຸນາ 2020 ແມ່ນ 1.038.617 ລ້ານກີບ (31 ທັນວາ 2019 : 1.038.617 ລ້ານກີບ)

IV. ໂຄງຮ່າງການຈັດຕັ້ງ ສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະກອບດ້ວຍ 7 ທ່ານ:

- ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ ເປັນປະທານ
- ທ່ານ ຄຳສຸກ ສູນດາລາ ເປັນຮອງປະທານ
- ທ່ານ ພູຂົງ ຈັນທະຈັກ ເປັນສະມາຊິກ
- ທ່ານ Stephane Mangiavacca ເປັນສະມາຊິກ
- ທ່ານ ພຸດທະຂັນ ຂັນຕີ ເປັນສະມາຊິກ
- ທ່ານ ຮອງສາດສະດາຈານ ປອ ພູເພັດ ກ້ຽວພິລະວົງ ເປັນສະມາຊິກ
- ທ່ານ ວຽງສຸກ ຈຸນທະວົງ ເປັນສະມາຊິກ

1.2. ປະຫວັດຫຍໍ້ຂອງສະພາບໍລິຫານ

ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ: ເປັນປະທານ



- ວັນເດືອນປີເກີດ: 24/11/1966
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດ
- ຕຳແໜ່ງປະຈຸບັນ : ຮອງລັດຖະມົນຕີ ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາເອກ, ປະລິນຍາໂທດ້ານເສດຖະສາດ ທີ່ມະຫາວິທະຍາໄລແຫ່ງຊາດອົດສະຕາລີ ປະເທດອົດສະຕາລີ, ປະລິນຍາໂທດ້ານບໍລິຫານທຸລະກິດທີ່ມະຫາວິທະຍາໄລທຳມະສາດ, ປະເທດໄທ, ປະລິນຍາຕີ, ປະລິນຍາໂທດ້ານຝຶຊິກ ແລະ ເລຂາຄະນິດທີ່ມະຫາວິທະຍາໄລມິດສະກູ ປະເທດລັດເຊຍ.

- **ທ່ານ ຄຳສຸກ ສຸນດາຣາ: ຮອງປະທານສະພາບໍລິຫານ**



- ວັນເດືອນປີເກີດ: 03/06/1945
- ສັນຊາດ : ລາວ
- ພາສາ : ລາວ, ອັງກິ ດ, ຝຣັ່ງ
- ຕຳແໜ່ງ : ກຳມະການອິດສະຫຼະ
- ປະຫວັດການສຶກສາ: ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ, ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍທີ່ເມືອງ ປານາ ປະເທດອິນເດຍ ແລະ ລະດັບປະລິນຍາຕີຈາກ ປະເທດ ອິດສະຕາລີ, ມະຫາວິທະຍາໄລນິວຊາວເວວ.

- **ທ່ານ ຣສຈ ປອ ພູເພັດ ກ້ຽວພິລາວົງ: ກຳມະການອິດສະຫຼະ**



- ວັນເດືອນປີເກີດ: 05/02/1974
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດ, ຍີ່ປຸ່ນ
- ຕຳແໜ່ງ : ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ
- ລະດັບການສຶກສາ: ປະລິນຍາເອກເສດຖະສາດ, ມະຫາວິທະຍາໄລໂຄເບ, ປະເທດຍີ່ປຸ່ນປະລິນຍາໂທ ແລະ ປະລິນຍາຕີ ວິສະວະກຳໂຍທາ ມະຫາວິທະຍາໄລ ໂອສະກາ, ປະເທດຍີ່ປຸ່ນ

- **ທ່ານ ພຸດທະຂັນ ຂັນຕີ : ກຳມະການ**



- ວັນເດືອນປີເກີດ: 02/05/1970
- ສັນຊາດ : ລາວ
- ພາສາ : ລາວ, ຫວຽດນາມ ແລະ ລັດເຊຍ
- ຕຳແໜ່ງ : ຮອງຫົວໜ້າຄັງເງິນແຫ່ງຊາດ ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາໂທ ທີ່ສະຖາບັນການເງິນຮ່າໂນ້ຍ, ສສ ຫວຽດນາມ ແລ ມະຫາວິ ທະຍາໄລ ດາແກັດສະຕານ ອາດີດສະຫະພາບໂຊຫວຽດ

- **ທ່ານ ພູຂົງ ຈັນທະຈັກ : ກຳມະການ**



- ວັນເດືອນປີເກີດ: 17/06/1964
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດແລະ ຣັງກາລີ .
- ຕຳແໜ່ງ : ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ລະດັບການສຶກສາ: ຊັ້ນສູງທິດສະດີ ການເມືອງ ຈາກໂຮງຮຽນການເມືອງ- ການປົກຄອງ ແລະ ປະລິນຍາໂທ ດ້ານເສດຖະກິດການເງິນຈາກປະເທດ ຣັງກາລີ.

- **ທ່ານ Stephane MANGIAVACCA: ກຳມະການ**



- ວັນເດືອນ ປີເກີດ: 11/07/1975
- ສັນຊາດ : ຝຣັ່ງ
- ພາສາ : ຝຣັ່ງ, ອັງກິດ, ສະເປນ, ຈີນ ແລະ ຍີ່ປຸ່ນ
- ຕຳແໜ່ງ : ຫົວໜ້າຝ່າຍທຸລະກິດຕ່າງປະເທດ, ຕາງໜ້າທະນາຄານ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
- ລະດັບການສຶກສາ : ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne, ຈົບປະລິນຍາຕີເສດຖະສາດ, ຈົບຊັ້ນສູງສາຂາ ວິສະວະກຳສາດ ດ້ວຍກຽດນິຍົມ ແລະ ເຂົ້າຮ່ວມໂຄງການແລກປ່ຽນກ່ຽວກັບວິສະວະກຳສິ່ງແວດລ້ອມ ທີ່ University of New Brunswick ປະເທດ Canada.

- **ທ່ານ ວຽກສຸກ ຈຸນທະວົງ: ກຳມະການ**



- ວັນເດືອນປີເກີດ: 15/08/1964
- ສັນຊາດ : ລາວ
- ພາສາ : ລາວ, ອັງກິດ ແລະ ເຊັກໂກ
- ຕຳແໜ່ງ : ຮອງຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- ລະດັບການສຶກສາ: ບໍລຸງທິດສະດີ ການເມືອງ 45 ວັນຈາກໂຮງຮຽນ ການເມືອງ - ການປົກຄອງ ແລະ ປະລິນຍາໂທ ສາຂາເສດຖະກິດການຄ້າຈາກສາທາລະນະລັດເຊັກ.

2. ໂຄງຮ່າງການຈັດຕັ້ງຂອງຄະນະອຳນວຍການ

2.1 ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ: ປະກອບມີ 6 ທ່ານ

- ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່
- ທ່ານ ລາໃຈ ຄັນພະວົງສ໌ ຮອງຜູ້ອຳນວຍການ
- ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ
- ທ່ານ ສຸພັກ ຖິ່ນໄຊພອນ ຮອງຜູ້ອຳນວຍການ
- ທ່ານ ບົວວັນ ສີມະລີວົງ ຮອງຜູ້ອຳນວຍການ
- ທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອຳນວຍການ

2.2 ໂຄງຮ່າງຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.1 ກອງປະຊຸມສະພາບໍລິຫານ

ສະພາບໍລິຫານ ໄດ້ດຳເນີນກອງປະຊຸມຂອງຕົນເອງລວມທັງໝົດ 06 ຄັ້ງ (ສາມັນ 02 ຄັ້ງ ແລະ ວິສາມັນ 04 ຄັ້ງ) ໂດຍສາມາດສັງລວມ ການ ເຄື່ອນໄຫວທີ່ສຳຄັນໄດ້ດັ່ງນີ້:

- ຮັບຮອງຜົນການກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2019 ຕາມມາດຕະຖານລາວ ແລະ ມາດຕະຖານສາກົນແບບສະເພາະກິດຈະການ, ແບບສັງລວມກິດຈະການ ແລະ ໄດ້ເປີດເຜີຍໃນເວັບໄຊຕະຫຼາດຫຼັກຊັບລາວ.
- ຮັບຮອງການແບ່ງປັນກຳໄລຫຼັງອາກອນເຂົ້າຄັງແຮຕ່າງໆ ແລະ ເງິນປັນຜົນ ປະຈຳປີ 2019.
- ພິຈາລະນາຄົ້ນຄວ້າການເພີ່ມທຶນຂອງຈົດທະບຽນໃຫ້ທະນາຄານລາວຝຣັ່ງ.
- ຮັບຮອງການປັບປຸງແຜນການ ແລະ ແຜນທຸລະກິດປະຈຳປີ 2020 ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຮັບຮອງ.
- ຮັບຮອງວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 ແລະ ຮັບຮອງເງິນປັນຜົນປະຈຳປີ 2019 ຈຳນວນ 813 ກີບ/ຮຸ້ນກີບ.
- ຮັບຮອງລະບຽບວ່າດ້ວຍນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຂອງລູກຄ້າສິນເຊື່ອຈາກການລະບາດຂອງພະຍາດໂຄວິດ-19 ພ້ອມທັງອອກແຈ້ງການ, ຄຳແນະນຳ ຫຼື ຄູ່ມືກ່ຽວກັບລູກຄ້າທີ່ໄດ້ຮັບຜົນກະທົບຕາມຄວາມເໝາະສົມໃນແຕ່ລະໄລຍະ.
- ຮັບຮອງຜົນການປະເມີນຊ່ອງຫວ່າງ ແລະ ແຜນການປັບປຸງໂຄງສ້າງການຄຸ້ມຄອງບໍລິຫານຄວາມສ່ຽງ ຂອງ ທຄຕລ.
- ຮັບຮອງການສ້າງຕັ້ງພະແນກຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ຜູ້ກ່ຳການຮ້າຍ (AML)
- ຮັບຮອງການແຕ່ງຕັ້ງຕຳແໜ່ງງານຂັ້ນຄະນະຜູ້ບໍລິຫານງານ ທຄຕລ ຈຳນວນນຶ່ງ.
- ພິຈາລະນາການສະເໜີຂໍສິນເຊື່ອຂອງລູກຄ້າລາຍໃຫຍ່ ແລະ ຮັບຮອງການຊ່ວຍເຫຼືອສັງຄົມຂອງ ທຄຕລ ຈຳນວນນຶ່ງ.

3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການໃຫ້ຄຳແນະນຳໃນການຄົ້ນຄວ້າ ແລະ ກຳນົດບັນດາລະບຽບການ ແລະ ນະໂຍບາຍດ້ານການຄຸ້ມຄອງຄວາມສ່ຽງ ພ້ອມທັງໄດ້ພິຈາລະນາຮັບຮອງເອົາບັນດານະໂຍບາຍ ແລະ ກົດລະບຽບທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງ ດັ່ງນີ້:

- ການຈັດລຳດັບຄວາມສ່ຽງທີ່ສຳຄັນ ເປັນຕົ້ນແມ່ນ ຕົວຊີ້ວັດຄວາມສ່ຽງດ້ານສິນເຊື່ອ ແລະ ຕົວຊີ້ວັດຄວາມສ່ຽງດ້ານສະພາບຄ່ອງ.
- ຕິດຕາມສັງລວມຄວາມສ່ຽງຫຼັກຂອງອົງກອນໃນດ້ານຕ່າງໆມີຈຳນວນ 14 ຕົວຊີ້ວັດຄວາມສ່ຽງ.
- ພິຈາລະນາຮັບຮອງແຜນການປັບປຸງໂຄງສ້າງການຄຸ້ມຄອງບໍລິຫານຄວາມສ່ຽງຂອງ ທຄຕລ.

- ຄົ້ນຄວ້າພິຈາລະນາການສ້າງຕັ້ງພະແນກສະກັດກັ້ນການຟອກເງິນ ຂອງ ທຄຕລ (ແຍກອອກຈາກພະແນກຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນ).
- ຕິດຕາມຄວາມຄືບໜ້າຂອງບັນດາໂຄງການຕ່າງໆທີ່ໄດ້ດຳເນີນການ ແລະ ນອນຢູ່ໃນໂຄງການຂອງບາວເຊວ 2 (ດຳເນີນໄປແລ້ວ ຈຳນວນ 08 ໂຄງການ ສຳເລັດ 02 ໂຄງການ ຄື: ພັດທະນາເຄື່ອງມືການບໍລິຫານການສູນເສຍພາຍໃນ ແລະ ການພັດທະນາການຄຸ້ມຄອງບໍລິຫານຂໍ້ມູນ, ສືບຕໍ່ 06 ໂຄງການ : ພັດທະນາລະບົບ Risk weighted Asset, ກຳນົດລາຄາໂອນທຶນພາຍໃນ, ການບໍລິຫານຊັບສິນ-ໜີ້ສິນ, ພັດທະນາລະບົບການຈັດອັນດັບສິນເຊື່ອ, ອະນຸມັດສິນເຊື່ອແບບທັນສະໄໝ ແລະ ການກຳນົດຕົວຊີ້ວັດການຄວບຄຸມຕາມຄວາມສ່ຽງ).
- ຄົ້ນຄວ້າວິເຄາະຄວາມສ່ຽງດ້ານເສດຖະກິດມະຫາພາກຂອງລາວທີ່ອາດຈະມີຜົນກະທົບຄວາມສ່ຽງຕໍ່ການດຳເນີນທຸລະກິດດ້ານທະນາຄານ.

3.3 ຄະນະກຳມະການກຳນົດຄ່າຕອບແທນ

ຄະນະກຳມະການໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາຮັບຮອງເອົາລະບຽບນະໂຍບາຍ ຂອງ ທຄຕລ ແນ່ໃສ່ຜົນປະໂຫຍດຂອງ ທຄຕລ ແລະ ຜູ່ຖືຮຸ້ນ ຊຶ່ງຄະນະກຳມະການໄດ້ຄົ້ນຄວ້າບັນດາລະບຽບການຕ່າງໆ ເພື່ອໃຫ້ສາມາດນຳສະເໜີຮັບຮອງຕາມສະພາບໍລິຫານ ທຄຕລ ຕາມຂັ້ນຕອນຄື: ພິຈາລະນາຮັບຮອງການປັບປຸງນະໂຍບາຍເບ້ຍປະຊຸມສະພາບໍລິຫານ, ຜູ້ກະກຽມເອກະສານ ແລະ ສະໜັບສະໜູນກອງປະຊຸມ ແລະ ມອບໃຫ້ພະສ່ວນກ່ຽວຂ້ອງໃນການຄົ້ນຄວ້ານະໂຍບາຍໃນການປິ່ນປົວສຸຂະພາບ ແລະ ກວດສຸຂະພາບປະຈຳປີໃຫ້ແກ່ສະມາຊິກສະພາບໍລິຫານ ທຄຕລ.

3.4 ຄະນະກຳມະການຄຸ້ມຄອງບໍລິຫານ

ໃນໄລຍະ 06 ເດືອນ ຕົ້ນປີ 2020 ທີ່ຜ່ານມາ ຄະນະກຳມະການຄຸ້ມຄອງບໍລິຫານໄດ້ເປີດກອງປະຊຸມເພື່ອຄົ້ນຄວ້າຮັບຮອງພິຈາລະນາຜົນການດຳເນີນງານຂອງ ທຄຕລ ແລະ ບັນຫາຕ່າງໆທີ່ຈະສະເໜີຜ່ານສະພາບໍລິຫານ ລວມທັງໝົດ 03 ຄັ້ງ ເຊິ່ງໄດ້ຮັບຮອງບາງເນື້ອໃນທີ່ສຳຄັນດັ່ງນີ້:

- ຄະນະໄດ້ຕິດຕາມຊຸກຍູ້ໃຫ້ທິດຊີ້ນຳຜົນການດຳເນີນທຸລະກິດຂອງ ທຄຕລ ເປັນປະຈຳຢ່າງໃກ້ຊິດ ແລະ ຮັບຮອງຜົນການກວດສອບເອກະສານນະການເງິນ ທຄຕລ ຕາມມາດຖານລາວ ປະຈຳປີ 2019.

- ນຳສະເໜີສະພາບໍລິຫານເພື່ອຮັບຮອງການແບ່ງຄັ້ງ ແລະ ເງິນປັນຜົນປະຈຳປີ 2019.

- ຮັບຮອງແຜນການປະຈຳປີ 2020, ບັນຫາສຳຄັນອື່ນໆ ເພື່ອສະເໜີສະພາບໍລິຫານ ແລະ ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງຕາມລຳດັບ.

- ຕິດຕາມ ແລະ ໃຫ້ທິດຊີ້ນຳວຽກງານການບໍລິຫານທຶນ, ບັນຫາດ້ານສະພາບຄ່ອງ, ການນຳໃຊ້ທຶນ ແລະ ການບໍລິຫານເງິນຕາຕ່າງປະເທດ ເປັນແຕ່ລະໄລຍະ ໂດຍສະເພາະໃຫ້ຄົ້ນຄວ້າຜົນກະທົບຈາກການນຳໃຊ້ບັດ ແລະ ຫາວິທີການແກ້ໄຂໃຫ້ທັນກັບສະພາບການ.

- ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ, ແຜນຍຸດທະສາດປະຈຳປີ, ແຜນຍຸດທະສາດໄລຍະຍາວ 2016-2020 ແລະ ການປະຕິບັດແຜນງານ, ໂຄງການ ຕ່າງໆ.

- ຕິດຕາມຄຸ້ມຄອງການບໍລິຫານສິນເຊື່ອໃຫ້ມີຄຸນນະພາບ, ການຄຸ້ມຄອງຕິດຕາມລູກຄ້າລາຍໃຫຍ່, ການແກ້ໄຂໜີ້ NPL ຢ່າງໃກ້ຊິດ ແລະ ຄົ້ນຄວ້າລົງເລິກລາຍລະອຽດດ້ານສິນເຊື່ອເພື່ອສ້າງລາຍຮັບເພີ່ມຕື່ມ.

- ຕິດຕາມວຽກງານຈັດຕັ້ງ- ພະນັກງານ: ການຕິດຕາມການພັດທະນາ ຍົກລະດັບພະນັກງານ ການນຳໃຊ້ງົບປະມານໃນ ການພັດທະນາບຸກຄະລາກອນ ແລະ ການຄົ້ນຄວ້າສ້າງຫຼັກສູດການເຝິກອົບຮົມເພື່ອຮອງຮັບການຂະຫຍາຍຕົວຂອງວຽກ ງານແຕ່ລະດ້ານໃນນັ້ນ, ເນັ້ນໃສ່ການສຳມະນາເຝິກອົບຮົມຕ່າງໆໃຫ້ຄົ້ນຄວ້າການນຳໃຊ້ລະບົບອອນລາຍໃຫ້ຫຼາຍຂຶ້ນ. ພ້ອມທັງພິຈາລະນາການປັບປຸງອັດຕາມະໂຍບາຍເບ້ຍປະຊຸມສະພາບໍລິ ຫານ ທຄຕລ ແລະ ນະໂຍບາຍອື່ນໆຕໍ່ຄະນະກຳ ມະການສະພາບໍລິຫານທີ່ບໍ່ປະຈຳການ. ສ່ວນການຮັບພະນັກງານໃໝ່ໃນປີ 2020 ແມ່ນໃຫ້ຄົ້ນຄວ້າໄລ່ລຽງດ້ານທຸລະ ກິດ ແລະ ຄວາມຈຳເປັນຂອງວຽກງານໃນແຕ່ລະຂົງເຂດ.

- ຮັບຮອງການແຍກພະແນກຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຟອກເງິນ ເພື່ອນຳສະເໜີຕາມຂັ້ນຕອນ.

- ຕິດຕາມຄວາມຄືບໜ້າໂຄງການຂາຍຮຸ້ນ ທຄຕລ ບ້ວງ 9%, ໂຄງການ Core Banking ໃໝ່ ແລະ ໂຄງການບາ ເຊວ 2 ເປັນແຕ່ລະໄລຍະ.

3.5 ຄະນະກຳມະການຄັດເລືອກ

ຄະນະກຳມະການໄດ້ຄົ້ນຄວ້າພິຈາລະນາບຸກຄະລາກອນຂັ້ນຄະນະບໍລິຫານງານ ເພື່ອສະເໜີຂໍແຕ່ງຕັ້ງຕຳແໜ່ງ ງານ ໃໝ່ ແລະ ຊັບຊ້ອນໜູນວຽນບັນດາຕຳແໜ່ງງານ ຂອງ ທຄຕລ ໃຫ້ມີຄວາມເໝາະສົມສອດຄ່ອງກັບສະພາບໃນແຕ່ ລະໄລຍະຢູ່ ພະແນກ, ສູນ ສຳນັກງານໃຫຍ່ ແລະ ສາຂາ ທຄຕລ ທົ່ວລະບົບ. ຄົ້ນຄວ້າພິຈາລະນາລາຍຊື່ບຸກຄະລາກອນ ເພື່ອສະເໜີປະກອບເຂົ້າລາຍຊື່ຂອງສະພາບໍລິຫານ ທຄຕລ ຊຸດໃໝ່ ວາລະ 2020 -2022 ເພື່ອນຳສະເໜີສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ທຄຕລ ຮັບຮອງ, ພ້ອມທັງພິຈາລະນາຮັບຮອງບັນດາຕຳແໜ່ງງານໃໝ່ ແລະ ການຊັບຊ້ອນ ພະນັກງານຂັ້ນຄະນະບໍລິຫານງານ ຂອງ ທຄຕລ ຈຳນວນນຶ່ງ.

3.6 ຄະນະກຳມະການກວດສອບ

- ຕິດຕາມພະນັກງານໃນການປະຕິບັດລະບຽບ, ສິດ, ຂັ້ນຕອນ, ຕ້ອງເອົາໃຈໃສ່ໃນວຽກງານການກວດກາສຸກເສີນ, ເຝົ້າ ລະວັງບັນຫາຂໍ້ຜິບເຫັນຕ່າງໆ ແລະ ການຕຳນິສິ່ງຂ່າວຈາກລູກຄ້າ, ເພື່ອໃຫ້ຮັບປະກັນ ແກ້ໄຂບັນຫາທັນການ. ຕິດຕາມ ການປະຕິບັດສິດການປ່ອຍສິນເຊື່ອຂອງສາຂາ ນຳໃຊ້ມາດຕະການແກ້ໄຂບັນຫາຕ່າງໆໃຫ້ເໝາະສົມ.

- ດຳເນີນການກວດກາປົກກະຕິ, ກວດກາສະເພາະກິດ, ກວດກາສະເພາະດ້ານ ແລະ ກວດກາສຸກເສີນຂອງບັນດາພະແນກ , ສູນ ແລະ ສາຂາ ທຄຕລ. ພ້ອມທັງຕິດຕາມການແກ້ໄຂຂໍ້ຜິບເຫັນຈາກກວດກາພາຍໃນ-ພາຍນອກ ຂອງບັນດາ ພະແນກການ, ສາຂາ ທຄຕລ ທົ່ວລະບົບ.

- ຕິດຕາມວຽກງານການແກ້ໄຂຂໍ້ຜິບເຫັນຂອງກວດສອບພາຍໃນ ແລະ ກວດສອບພາຍນອກຢ່າງເປັນປົກກະຕິ.

- ສຳເລັດການປະສານງານສະໜອງຂໍ້ມູນເອກະສານກ່ຽວກັບການເງິນ ທຄຕລ ປີ 2019 ໃຫ້ບໍລິສັດກວດສອບ ແລະ ການອອກ ບົດລາຍງານຕາມມາດຖານລາວ, ມາດຖານສາກົນສະເພາະກິດຈະການ ແລະ ສັງລວມກິດຈະການເພື່ອສະເໜີສະພາ ບໍລິຫານຮັບຮອງ.

- ສຳເລັດການປະສານງານໃນການອອກຈົດໝາຍຄຸ້ມຄອງເຖິງຄະນະບໍລິຫານ (Management Letter ຫຼື ML) ປະ ຈຳປີ 2019.

- ດຳເນີນການປະສານງານກັບບໍລິສັດ PWC ໃນການທົບທວນເອກະສານລາຍງານການເງິນ ທຄຕລ ປະຈຳ 06 ເດືອນ ຕົ້ນປີ 2020.

- ກະກຽມດຳເນີນການຄັດເລືອກເອົາບໍລິສັດກວດສອບພາຍນອກ ເພື່ອກວດສອບ ທຄຕລ ປະຈຳ 2021.

- ຕິດຕາມການລາຍງານປະກົດການຫຍໍ້ທໍ້, ວຽກງານການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃຫ້ແກ່ຄະນະບໍລິຫານງານ ແລະ ທະນາຄານແຫ່ງ ສປປ ລາວ.

v. ຄວາມຮັບຜິດຊອບໃນສັງຄົມ:

➢ ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆໃນໄລຍະ 06 ຕົ້ນປີ 2020, ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:

- ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL OneHeart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ໃນໄລຍະ 06 ເດືອນ ປີ 2020 ທຄຕລ ທີ່ໄດ້ເປີດຮັບບໍລິຈາກ, ສາມາດລະດົມຈາກສັງຄົມໃນການຊ່ວຍເຫຼືອສັງຄົມໃນໂຄງການລະດົມທຶນການຊ່ວຍເຫຼືອຕ້ານພະຍາດປອດອັກເສບຈາກເຊື້ອຈຸລາໂລກສາຍພັນໃໝ່ COVID-19, ໂຄງການລະດົມທຶນຊ່ວຍເຫຼືອເພື່ອຜ່າຕັດກ້ອນເນົ້າຢູ່ກົກຂາເບື້ອງຂວາ ແລະ ຮ່ວມສົມທົບທຶນຊື້ຜ້າແພເພື່ອຜະລິດຖົງປັ໊ມມອບໃຫ້ເດັກດ້ອຍໂອກາດໃນຊຸມຊົນ ເຊິ່ງມີຜູ້ຮ່ວມບໍລິຈາກທັງໝົດ 1.935 ຄັ້ງ ເປັນຈຳນວນ 182,91 ລ້ານກວ່າກີບ.
- ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ຄິດເປັນຈຳນວນເງິນທັງໝົດຫຼາຍກວ່າ 432 ລ້ານກວ່າກີບ.

ຜູ້ອຳນວຍການໃຫຍ່

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຂົງ ຈັນທະຈັກ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

pwc

ເອກະສານລາຍງານການເງິນກາງປີ (ທົບທວນຄືນ)

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020

www.pwc.com/la

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນກາງປີ (ທົບທວນຄືນ)
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມີຖຸນາ 2020

ສາລະບານ	**ໜ້າ**
ບົດລາຍງານການທົບທວນຄືນຂອງເອກະສານລາຍງານການເງິນກາງປີ	1
ໃບລາຍງານຜົນການດຳເນີນງານ	2
ໃບລາຍງານຜົນການດຳເນີນງານສັງລວມ	3
ໃບລາຍງານຖານະການເງິນ	4
ໃບລາຍງານສ່ວນປ່ຽນແປງທຶນ	5
ໃບລາຍງານກະແສເງິນສົດ	6-7
ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນກາງປີ ໂດຍຫຍໍ້	8-24

pwc

ບົດລາຍງານການທົບທວນຄືນຂອງເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ເອກະສານລາຍງານການເງິນກາງປີ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ສຳລັບຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020, ໃບລາຍງານຜົນການດຳເນີນງານ, ໃບລາຍງານຜົນການດຳເນີນງານສັງລວມ, ໃບລາຍງານສ່ວນປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີ ໂດຍຫຍໍ້. ຜູ້ບໍລິຫານຂອງບໍລິສັດ ມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນກາງປີ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ຕາມທີ່ໄດ້ກຳນົດໄວ້ໃນບົດອະທິບາຍຊ້ອນທ້າຍ ໃນຂໍ້ທີ 3 ແລະ 4 ຂອງເອກະສານລາຍງານການເງິນສະບັບນີ້. ສ່ວນພວກເຮົາແມ່ນຮັບຜິດຊອບໃນການສະຫຼຸບກ່ຽວກັບເອກະສານລາຍງານການເງິນກາງປີ ດັ່ງກ່າວ ບົນພື້ນຖານການທົບທວນຄືນຂອງພວກເຮົາ.

ຂອບເຂດການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານການທົບທວນຄືນແບບສາກົນ 2410 "ການທົບທວນຄືນ ເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະປຽບທຽບຂໍ້ມູນທີ່ກ່ຽວຂ້ອງ ແລະ ວິທີການທົບທວນຄືນອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບຂອງພວກເຮົາໄດ້. ດັ່ງນັ້ນ, ພວກເຮົາຈະບໍ່ສະແດງຄວາມເຫັນ.

ການສະຫຼຸບ

ບົນພື້ນຖານການທົບທວນຄືນຂອງພວກເຮົາ, ບໍ່ມີສິ່ງໃດທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີຂອງທະນາຄານ ສຳລັບຫົກເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2020 ດັ່ງກ່າວ, ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືວ່າມີຄວາມສຳຄັນຫຼາຍຕາມນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນ ຂໍ້ທີ 3 ແລະ 4 ໃນເອກະສານລາຍງານການເງິນສະບັບນີ້.

ຂໍ້ມູນແລະເຫດການທີ່ເນັ້ນ - ພື້ນຖານການບັນຊີ

ພວກເຮົາບໍ່ໄດ້ສະແດງຄວາມເຫັນຢ່າງມີເງື່ອນໄຂໃນເລື່ອງນີ້, ພວກເຮົາຂໍໃຫ້ຂໍ້ສັງເກດບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ຂໍ້ທີ 3 ແລະ 4 ເຊິ່ງອະທິບາຍພື້ນຖານການບັນຊີຂອງເອກະສານລາຍງານການເງິນນີ້. ເອກະສານລາຍງານການເງິນນີ້ຖືກກະກຽມຂຶ້ນໂດຍໃຊ້ພື້ນຖານການບັນຊີ ທີ່ມີຄວາມແຕກຕ່າງຈາກມາດຕະຖານສາກົນດ້ານການລາຍງານການເງິນ (IFRS). ຜູ້ອ່ານຄວນລະມັດລະວັງເນື່ອງຈາກເອກະສານລາຍງານການເງິນບໍ່ໄດ້ມີຈຸດປະສົງທີ່ຈະສະແດງຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດ ໃຫ້ສອດຄ່ອງກັບ IFRS.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ (ລາວ) ຈຳກັດ ຜູ້ດຽວ

ທ່ານ ອະພິສິດ ທ່ຽງຕິງພົນໄຊ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 7 ກັນຍາ 2020

ໃບລາຍງານຜົນການດຳເນີນງານ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020

	ບິດ ອະທິບາຍ	30 ມິຖຸນາ 2020 ລ້ານກີບ	30 ມິຖຸນາ 2019 ປັບປຸງຄືນ ລ້ານກີບ
ລາຍຮັບດອກເບ້ຍ		1.202.862	1.075.642
ລາຍຈ່າຍດອກເບ້ຍ		(635.405)	(577.693)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	6	**567.457**	**497.949**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ		124.758	119.991
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ		(13.733)	(13.948)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	7	**111.025**	**106.043**
ລາຍຮັບສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ		16.909	19.070
ຂາດທຶນສຸດທິ ຈາກການຊື້-ຂາຍເອກະສານອານຸພັນ		-	(1.204)
ລາຍຮັບອື່ນໆຈາກການດຳເນີນງານ		10.481	71.592
ລາຍຮັບສຸດທິຈາກການດຳເນີນງານ		**705.872**	**693.450**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ແກ່ລູກຄ້າ		(351.835)	(122.631)
ຫັກເພີ່ມ ຄ່າເສື່ອມມູນຄ່າ ການຊັບສິນທາງດ້ານການເງິນ		(36.049)	(1.861)
ລາຍຮັບສຸດທິຈາກການດຳເນີນງານ		**317.988**	**568.958**
ລາຍຈ່າຍພະນັກງານ		(138.938)	(152.676)
ຄ່າຫຼ້ຍຫ້ຽນ		(36.263)	(35.521)
ຄ່າຫຼ້ຍຫ້ຽນຂອງສິດໃນການນຳໃຊ້ຊັບສິນ		(3.187)	(2.358)
ລາຍຈ່າຍອື່ນໆໃນການດຳເນີນງານ	8	(77.359)	(74.859)
ລາຍຈ່າຍທັງໝົດໃນການດຳເນີນງານ		**(255.748)**	**(265.414)**
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນບໍລິສັດຮຸ້ນສ່ວນ		12.306	26.001
ກຳໄລກ່ອນອາກອນ		**74.546**	**329.545**
ລາຍຈ່າຍອາກອນກຳໄລ	20	(29.805)	(72.001)
ກຳໄລສຸດທິພາຍໃນໄລຍະ		**44.741**	**257.544**
ກຳໄລ ຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	9	215	1.240

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນູຂີ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 7 ກັນຍາ 2020

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນການີ້.

ໃບລາຍງານຜົນການດຳເນີນງານສັງລວມ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020

	30 ມິຖຸນາ 2020 ລ້ານກີບ	30 ມິຖຸນາ 2019 ປັບປຸງຄືນ ລ້ານກີບ
ກຳໄລສຸດທິພາຍໃນໄລຍະ	**44.741**	**257.544**
ລາຍຮັບສັງລວມອື່ນໆ		
ລາຍການທີ່ຈະຈັດປະເພດລາຍການໃໝ່ໄປຍັງກຳໄລ ຫຼືຂາດທຶນໃນພາຍຫຼັງ		
ການອັດມຸນຄ່າຄືນໃໝ່ຂອງສຳຮອງຜົນປະໂຫຍດຫຼັງອອກການ	(1.464)	-
ອາກອນກຳໄລທີ່ກ່ຽວຂ້ອງກັບລາຍຮັບສັງລວມອື່ນໆ	-	-
ລວມລາຍການທີ່ຈະຈັດປະເພດໃໝ່ໄປຍັງກຳໄລ ຫຼື ຂາດທຶນ ໃນພາຍຫຼັງ	(1.464)	-
ກຳໄລ (ຂາດທຶນ) ສັງລວມອື່ນໆ ພາຍໃນໄລຍະ, ສຸດທິຈາກອາກອນ	**(1.464)**	**-**
ກຳໄລສັງລວມອື່ນໆ ພາຍໃນໄລຍະ	**43.277**	**257.544**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພຸຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 7 ກັນຍາ 2020

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2020

	ບິດ ອະທິບາຍ	30 ມິຖຸນາ 2020 ລ້ານກີບ	31 ທັນວາ 2019 ປັບປຸງຄືນ ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ		11.319.688	9.202.045
ເງິນຝາກຢູ່ທະນາຄານອື່ນ	10	3.927.847	4.493.536
ເງິນກູ້ໃຫ້ແກ່ລູກຄ້າ	11	29.079.992	27.490.492
ຊັບສິນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	12	93.574	129.623
ເງິນລົງທຶນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	13	3.363.383	3.453.937
ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ທີ່ບັນທຶກໂດຍວິທີສ່ວນໄດ້ເສຍ -ສຸດທິ	14	580.966	568.897
ຊັບສິນບັດຄົງທີ່ ແລະ ອຸປະກອນ	15	440.038	455.721
ສິດໃນການນຳໃຊ້ຊັບສິນ		55.108	54.814
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	16	244.529	245.042
ຊັບສິນອາກອນລໍຖ້າຊຳລະສະສາງ		11.578	28.768
ຊັບສິນອື່ນໆ		551.450	471.430
ລວມຊັບສິນ		**49.668.153**	**46.594.305**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	17	4.004.350	4.063.635
ໜີ້ຕ້ອງສົ່ງລູກຄ້າ	18	39.989.216	36.419.928
ເງິນກູ້ຢືມຈາກທະນາຄານອື່ນ	19	3.029.485	3.705.378
ໜີ້ສິນຕາມສັນຍາເຊົ່າ		14.232	14.249
ອາກອນຄ້າງຊຳລະ	20	33.247	41.309
ໜີ້ສິນອື່ນໆ		583.996	210.577
ລວມໜີ້ສິນ		**47.654.526**	**44.455.076**
ທຶນ			
ທຶນຈົດທະບຽນ	21	1.038.617	1.038.617
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	22	753.399	604.423
ການວັດມູນຄ່າຄືນໃໝ່ຂອງສຳຮອງຜົນປະໂຫຍດຫຼັງອອກການ		10.618	12.082
ກຳໄລສະສົມ		210.993	484.107
ລວມທຶນ		**2.013.627**	**2.139.229**
ລວມໜີ້ສິນ ແລະ ທຶນ		**49.668.153**	**46.594.305**

ກະກຽມໂດຍ:

ທ່ານ ນ. ພຸທສົງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກົງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພູວົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 7 ກັນຍາ 2020

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນງວດນີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ອນປ່ຽນແປງທຶນ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020

	ທຶນຈົດທະບຽນ ລ້ານກີບ	ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ ລ້ານກີບ	ການອັດມູນຄ່າຄືນໃໝ່ຂອງສຳຮອງຜົນປະໂຫຍດຫຼັງອອກການ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອໃນວັນທີ 31 ທັນວາ 2019 - ປັບປຸງຄືນ	**1.038.617**	**604.423**	**12.082**	**484.107**	**2.139.229**
ເງິນປັນຜົນ ທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2019 (ບົດອະທິບາຍຂໍ້ທີ 23)	-	-	-	(168.879)	(168.879)
ຂາດທຶນສຸດທິພາຍໃນໄລຍະ	-	-	-	44.741	44.741
ແບ່ງເຂົ້າຄັງສະສົມພາຍໃນປີ 2019	-	148.976	-	(148.976)	-
ການອັດມູນຄ່າຄືນໃໝ່ຂອງສຳຮອງຜົນປະໂຫຍດຫຼັງອອກການ	-	-	(1.464)	-	(1.464)
ຍອດເຫຼືອໃນວັນທີ 30 ມິຖຸນາ 2020	**1.038.617**	**753.399**	**10.618**	**210.993**	**2.013.627**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກົງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພຸຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 7 ກັນຍາ 2020

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນການປີເຫຼົ່ານີ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020

	30 ມິຖຸນາ 2020 ລ້ານກີບ	30 ມິຖຸນາ 2019 ປັບປຸງຄືນ ລ້ານກີບ
ກິດຈະກຳການດຳເນີນງານ		
ກຳໄລກ່ອນອາກອນ	**74.546**	**329.545**
ປັບປຸງ:		
ຄ່າຫຼຸ້ຍຫ້ຽນ	36.263	35.521
ຄ່າຫຼຸ້ຍຫ້ຽນສິດຂອງການໃຊ້ຊັບສິນ	3.187	2.358
ພາລະໜີ້ສິນຈາກສັນຍາເຊົ່າ	-	(3.923)
ລາຍຈ່າຍຄ່າເສື່ອມມູນຄ່າ	351.835	122.631
ສ່ວນປ່ຽນແປງຈາກການຂາດທຶນຄ່າເສື່ອມ ສຳລັບຊັບສິນທາງດ້ານການເງິນ	36.049	1.861
ກຳໄລຂອງຮຸ້ນຈາກເງິນລົງທຶນໃນບໍລິສັດຮຸ້ນສ່ວນ	(12.306)	(26.001)
ລາຍຈ່າຍຜົນປະໂຫຍດຂອງພະນັກງານຫລັງອອກການ	3.126	3.664
ລາຍຮັບດອກເບ້ຍ	(1.202.862)	(1.079.169)
ລາຍຈ່າຍດອກເບ້ຍ	635.405	577.693
ລາຍຮັບເງິນປັນຜົນ	(3.835)	(5.992)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການ ປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ	**(78.592)**	**(41.812)**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ		
ເງິນຝາກຢູ່ທະນາຄານອື່ນ	(531.694)	464.100
ເງິນກູ້ໃຫ້ແກ່ລູກຄ້າ	(1.265.012)	(1.732.243)
ລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	74.172	51.446
ຊັບສິນອື່ນໆ	(33.483)	(23.000)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ		
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ ແລະ ທຫລ	(54.159)	1.033.034
ໜີ້ຕ້ອງສົ່ງລູກຄ້າ	3.522.750	2.143.215
ກູ້ຢືມຈາກທະນາຄານອື່ນ	(662.087)	756.417
ໜີ້ສິນອື່ນໆ	326.678	(67.955)
ລາຍຮັບດອກເບ້ຍທີ່ໄດ້ຮັບ	543.951	959.168
ລາຍຈ່າຍດອກເບ້ຍທີ່ໄດ້ຈ່າຍ	(612.203)	(511.998)
ອາກອນລາຍໄດ້ທີ່ໄດ້ຈ່າຍພາຍໃນໄລຍະ	(20.676)	(59.994)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ	**1.209.645**	**2.970.378**
ກິດຈະກຳການລົງທຶນ		
ເງິນສົດຈ່າຍໃນການຈັດຊື້ ແລະ ການກໍ່ສ້າງຊັບສົມບັດຖາວອນ	(20.580)	(64.108)
ເງິນສົດຮັບຈາກການຂາຍຊັບສົມບັດຖາວອນ	514	22.085
ເງິນສົດຈ່າຍໃນການຈັດຊື້ສິດໃນການນຳໃຊ້ຊັບສິນ	(3.481)	-
ເງິນປັນຜົນທີ່ໄດ້ຮັບ	5.431	7.429
ເງິນສົດຈ່າຍສຳລັບການລົງທຶນໃນບໍລິສັດຮຸ້ນສ່ວນ	(1.360)	(2.040)
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນກິດຈະກຳການລົງທຶນ	**(19.476)**	**(36.634)**
ກິດຈະກຳທາງການເງິນ		
ຈ່າຍເງິນປັນຜົນ	(168.879)	(205.855)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳທາງການເງິນ	**(168.879)**	**(205.855)**

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນການປີເຫຼົ່ານີ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020

	ບິດ ອະທິບາຍ	30 ມິຖຸນາ 2020 ລ້ານກີບ	30 ມິຖຸນາ 2019 ປັບປຸງຄືນ ລ້ານກີບ
ເພີ່ມຂຶ້ນສຸດທິ ຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**1.021.290**	**2.727.889**
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນໄລຍະ		**11.722.384**	**7.201.769**
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໄລຍະ	24	**12.742.674**	**9.929.658**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກົງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພຸຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ.
ວັນທີ: 7 ກັນຍາ 2020

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 24 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນງວດປີເຫຼົ່ານີ້.

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນທະນາຄານມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພຸມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີລາຍລະອຽດກ່ຽວກັບ ທະນາຄານດັ່ງລຸ່ມນີ້:

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປ່າງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ໃນວັນທີ 30 ມິຖຸນາ 2020, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ບໍລິສັດຮຸ້ນສ່ວນ, ຊາວ (20) ສາຂາຫຼັກ, ເກົ້າສິບສາມ (93) ໜ່ວຍບໍລິການ ແລະ ສິບຫົກ (16) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ກິດຈະກຳຫຼັກຂອງທະນາຄານ, ບໍລິສັດຮຸ້ນສ່ວນ ເພື່ອສະໜອງການບໍລິການດ້ານທະນາຄານປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ
- ປະກັນໄພ
- ຫຼັກຊັບ

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 30 ມິຖຸນາ 2020 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	%
ລັດຖະບານ	124.634.021	60
ຄຸ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ	62.316.920	30
	207.723.300	**100**

ເອກະສານລາຍງານການເງິນກາງປີ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນ.

ທະນາຄານໄດ້ອອກເອກະສານລາຍງານການເງິນສະເພາະກິດຈະການອີກສະບັບ. ຄວາມແຕກຕ່າງທີ່ສຳຄັນຈາກບົດລາຍງານ ສະບັບນີ້ ຄືໃນເອກະສານລາຍງານການເງິນສະເພາະກິດຈະການ ແມ່ນອັດມູນຄ່າເງິນລົງທຶນ ໂດຍໃຊ້ວິທີຕົ້ນທຶນ.

ເອກະສານລາຍງານການເງິນກາງປີສະບັບນີ້ໄດ້ຮັບການຮັບຮອງຈາກ ສະພາຜູ້ອຳນວຍການ ໃນວັນທີ 7 ກັນຍາ 2020.

2. ເຫດການສຳຄັນຕ່າງໆທີ່ເກີດຂຶ້ນໃນໄລຍະ

ເລີ່ມແຕ່ວັນທີ 1 ເມສາ 2020 ທາງລັດຖະບານໄດ້ມີຄຳສັ່ງໃຫ້ຢຸດການດຳເນີນງານຊົ່ວຄາວ ຍົກເວັ້ນ ທະນາຄານ. ລັດຖະບານໄດ້ ອອກມາດຕະການລ່ວງໜ້າໃນການປ້ອງກັນ ທີ່ຍັງມີຜົນສືບຕໍ່ໃນການຈັດຕັ້ງປະຕິບັດທົ່ວພາກພື້ນລວມທັງການຈຳກັດ ແລະ ການຄວບຄຸມໃນການເດີນທາງ.

ລັດຖະບານມີຍຸດທະສາດທີ່ດີໃນການຮັບມືກັບພະຍາດ COVID-19. ໃນປະຈຸບັນທຸລະກິດສ່ວນໃຫຍ່ແມ່ນສາມາດດຳເນີນງານໄດ້ ຕາມປົກກະຕິຍົກເວັ້ນໃນບາງຂະແໜງການເຊັ່ນ: ໂຮງແຮມ, ການທ່ອງທ່ຽວ, ເຊິ່ງບໍ່ມີຜົນກະທົບຫຍັງຕໍ່ກັບທະນາຄານ.

ຜູ້ບໍລິຫານໄດ້ພິຈາລະນາວ່າ ຈະບໍ່ມີຜົນກະທົບທີ່ເປັນສາລະສຳຄັນ ຈາກການລະບາດພະຍາດ COVID-19.

3. ພື້ນຖານການບັນຊີ

ເອກະສານລາຍງານການເງິນກາງປີໂດຍຫຍໍ້ ໄດ້ຖືກສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ຕາມທີ່ໄດ້ກຳ ນົດໄວ້ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2019. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານ ສ່ວນປ່ຽນແປງທຶນເຈົ້າຂອງ ເປັນຕົ້ນ) ແມ່ນໄດ້ນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີ ແລະ ເປັນໄປ ຕາມກົດລະບຽບການເປີດເຜີຍ ທີ່ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO).

ອີງຕາມກົດໝາຍ ວ່າດ້ວຍການບັນຊີ ແລະ ຂໍ້ກຳນົດກ່ຽວກັບການບັນຊີ ແລະ ການກວດສອບບັນຊີໃນສ່ວນຂອງຫຼັກຊັບອອກໂດຍ ກະຊວງການເງິນ (MOF) ແລະ ພາຍໃຕ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ໃນ ສປປ ລາວ ບໍລິສັດທີ່ຈົດ ທະບຽນໃນຕະຫຼາດຫຼັກຊັບ ເຊິ່ງຖືເປັນບໍລິສັດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ຕ້ອງສ້າງເອກະສານລາຍງານການເງິນສາກົນ (IFRS).

ກະຊວງການເງິນໄດ້ອອກແຈ້ງການເລກທີ 1137/ກງ, ໃນວັນທີ 27 ເມສາ 2020, ວິສາຫະກິດທີ່ມີຜົນປະໂຫຍດຕໍ່ສາທາລະນະ (PIE) ຕ້ອງໄດ້ນຳໃຊ້ມາດຕະຖານການລາຍງານການເງິນສາກົນ (IFRS) ພາຍໃນວັນທີ 1 ມັງກອນ 2026 ເຊິ່ງໄດ້ເລື່ອນມາຈາກ ວັນທີ 31 ທັນວາ 2021.

ໃນວັນທີ 25 ພຶດສະພາ 2020 ຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອອກແຈ້ງການສະບັບເລກທີ 009/ຄຄຊ ເຊິ່ງໄດ້ລະບຸກ່ຽວ ກັບການຍືດເວລາສຳລັບບໍລິສັດຈົດທະບຽນເພື່ອກະກຽມແຜນການປະຕິບັດມາດຕະຖານ IFRS ຈົນຮອດວັນທີ 31 ທັນວາ 2025 ແລະ ໃຫ້ເລີ່ມຈັດຕັ້ງປະຕິບັດ, ເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ໃນລະຫວ່າງການປັບປ ຽນ ຕ້ອງໄດ້ສ້າງແຜນກ່ຽວກັບການນຳໃຊ້ IFRS ເພື ່ອມອບໃຫ້ກະຊວງການເງິນ (MOF) ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ເພື ່ອການຕິດຕາມ ເອກະສານລາຍງານການເງິນກາງປີ ຕ້ອງໄດ້ອ່ານຄວບຄູ່ກັບ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019.

ໃບລາຍງານສ່ວນປ ່ຽນແປ ່ງຂອງທຶນ ສຳລັບໄລຍະ ຫົກເດືອນຕົ ້ນປີ ສິ ້ນສຸດວັນທີ 30 ມິຖຸນາ 2019 ບ ່ ໄດ ້ ຖືກນ ຳ ສະ ເໜີ ເປັ ນ ຂໍ ້ ມູ ນ ປຽບທຽບໃນເອກະສານລາຍງານການເງິນສະບັບນີ ້ ຄືກັ ນ ກັ ບ ເອ ກ ະ ສ ານ ລ າ ຍ ງ ານ ກ ານ ເ ງິ ນ ຂ ອ ງ ປ ີ ທ ີ ່ ຜ ່ ານ ມ າ

ໃນການກະກຽມເອກະສານລາຍງານທາງການເງິນກາງປີ ໂດຍຫຍໍ້ນັ້ນ ຝ່າຍຜູ້ບໍລິຫານຈຳເປັນຕ້ອງໃຊ້ດຸນພິນິດການປະມານການ ແລະ ຂໍ້ສົມມຸດຖານທີ່ມີຜົນກະທົບຕໍ່ຈຳນວນການລາຍງານ ມູນຄ່າຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍ ຊັບສິນ ແລະ ໜີ້ສິນ ໃນວັນທີຂອງເອກະສານການເງິນກາງປີ ໂດຍຫຍໍ້ ແລະ ຈຳນວນຂອງ ລາຍໄດ້ ແລະ ຄ່າໃຊ້ຈ່າຍ ໃນໄລຍະຂອງການລາຍງານ. ເຖິງແມ່ນວ່າ ການປະມານການເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນ ປະຈຸບັນ, ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການປະມານການເຫຼົ່ານີ້.

4. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນກາງປີ ແມ່ນສອດຄ່ອງກັບຂໍ້ມູນທີ່ນຳໃຊ້ເຂົ້າໃນເອກະສານລາຍງານການເງິນປະຈຳປີ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2019, ຍົກເວັ້ນສິ່ງຕໍ່ໄປນີ້:

ອີງຕາມການປະກາດຂອງ ກະຊວງການເງິນ ແລະ ສຄຄຊ ດັ່ງທີ່ໄດ້ກ່າວໄວ້ໃນບົດອະທິບາຍຂໍ້ທີ 3. ທະນາຄານກຳລັງສ້າງແຜນການໃນການຮັບຮອງເປັນ IFRS ຢ່າງເຕັມຮູບແບບ ໃນອີກສອງສາມປີຂ້າງໜ້າ. ກ່ອນໜ້ານີ້ທະນາຄານໄດ້ມີການນຳໃຊ້ມາດຕະຖານສາກົນດ້ານການລາຍງານທາງການເງິນສະບັບທີ 13 "ການວັດມູນຄ່າຍຸດຕິທຳ" ແລະ ມາດຕະຖານສາກົນດ້ານການລາຍງານທາງການເງິນສະບັບທີ 7 "ເຄື່ອງມືທາງການເງິນ : ການເປີດເຜີຍຂໍ້ມູນ" ແລະມີການປ່ຽນແປງນະໂຍບາຍການບັນຊີເຫຼົ່ານີ້ ໃນປີ 2020 ເຊິ່ງການປ່ຽນແປງນີ້ບໍ່ມີຜົນກະທົບຕໍ່ເອກະສານລາຍງານການເງິນ ດັ່ງນັ້ນຈຶ່ງບໍ່ມີການປັບປຸງຍ້ອນຫຼັງ ສຳລັບເລື່ອງນີ້.

5. ການປັບປຸງຄືນຂອງປີຜ່ານມາ

ຫຼັງຈາກທົບທວນລາຍການເຄື່ອນໄຫວຄືນຂອງປີຜ່ານມາແລ້ວຜູ້ບໍລິຫານໄດ້ພົບວ່າມີລາຍການເຄື່ອນໄຫວທີ່ຄວນໄດ້ຮັບການປັບປຸງຄືນໃນເອກະສານລາຍງານການເງິນ. ມີລາຍການຄື:

5.1 ອາກອນກຳໄລລໍຖ້າຊຳລະສະສາງ, ອີງຕາມກົດໝາຍສ່ວຍສາອາກອນສະບັບໃໝ່ທີ່ອະນຸມັດໂດຍ ສະພາແຫ່ງຊາດຂອງ ສປປ ລາວ ໃນວັນທີ 18 ມິຖຸນາ 2019, ອັດຕາອາກອນກຳໄລແມ່ນປ່ຽນຈາກ 24% ເປັນ 20% ຂອງກຳໄລທາງອາກອນທີ່ມີຜົນບັງຄັບໃຊ້ ຕັ້ງແຕ່ປີ 2020 ເປັນຕົ້ນໄປ ສະນັ້ນ, ຜູ້ບໍລິຫານຈຶ່ງໄດ້ປັບປຸງຄືນອັດຕາອາກອນກຳໄລ ສຳລັບການຄິດໄລ່ອາກອນກຳໄລລໍຖ້າຊຳລະສະສາງຂອງປີການບັນຊີ 2019 ໂດຍການນຳໃຊ້ອັດຕາໃໝ່ ເຊິ່ງຈະເຮັດໃຫ້ລໍຖ້າຊຳລະທີ່ນຳສະເໜີຢ່າງເໝາະສົມ.

5.2 ການລົງທຶນໃນບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ພາຍຫຼັງພິຈາລະນາຄຳນິຍາມໃນ IFRS 11- ການຮ່ວມການງານ ແລະພົບວ່າການລົງທຶນໃນ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ຄວນຮັບຮູ້ວ່າເປັນບໍລິສັດຮຸ້ນສ່ວນ ເນື່ອງຈາກການຕັດສິນໃຈທັ້ງໝົດທີ່ກ່ຽວຂ້ອງກັບການດຳເນີນງານແລະການເງິນ ຈຳເປັນຕ້ອງໄດ້ຮັບການລົງຄະແນນສຽງຢ່າງເປັນເອກະພາບກັນ, ສະນັ້ນ, ຜູ້ບໍລິຫານໄດ້ປັບປຸງ ເອກະສານລາຍງານການເງິນຄືນໂດຍ ການແຍກ ແລະ ຮັບຮູ້ສ່ວນແບ່ງກຳໄລຈາກການລົງທຶນໃນ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ແທນ.

5. ການປັບປຸງຄືນຂອງປີຜ່ານມາ (ຕໍ່)

ຕາຕະລາງຕໍ່ໄປນີ້ສະແດງລາຍການໃນເອກະສານລາຍງານການເງິນທີ່ຖືກກະທົບ ສຳລັບ ແຕ່ລະລາຍການ.

	ໃນວັນທີ 31 ທັນວາ 2019		
	ສະແດງໃນເບື້ອງຕົ້ນ ລ້ານກີບ	ເພີ່ມຂຶ້ນ/ (ຫຼຸດລົງ) ລ້ານກີບ	ປັບປຸງຄືນ ລ້ານກີບ
ລາຍຮັບດອກເບ້ຍ	1.079.169	(3.527)	1.075.642
ລາຍຈ່າຍດອກເບ້ຍ	(577.693)	-	(577.693)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**501.476**	**(3.527)**	**497.949**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	121.378	(1.387)	119.991
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	(13.948)	-	(13.948)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**107.430**	**(1.387)**	**106.043**
ລາຍຮັບສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ	19.070	-	19.070
ຂາດທຶນສຸດທິ ຈາກການຊື້-ຂາຍເອກະສານອານຸພັນ	(1.204)	-	(1.204)
ລາຍຮັບອື່ນໆຈາກການດຳເນີນງານ	71.803	(211)	71.592
ລາຍຮັບສຸດທິຈາກການດຳເນີນງານ	**698.575**	**(5.125)**	**693.450**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ແກ່ລູກຄ້າ	(122.631)	-	(122.631)
ຫັກເພີ່ມ ຄ່າເສື່ອມມູນຄ່າ ການຊັບສິນທາງດ້ານການເງິນ	(1.938)	77	(1.861)
ລາຍຮັບສຸດທິຈາກການດຳເນີນງານ	**574.006**	**(5.048)**	**568.958**
ລາຍຈ່າຍພະນັກງານ	(153.970)	1.294	(152.676)
ຄ່າຫຼ້ຍຫ້ຽນ	(35.708)	187	(35.521)
ຄ່າຫຼ້ຍຫ້ຽນຂອງສິດໃນການນຳໃຊ້ຊັບສິນ	(2.562)	204	(2.358)
ລາຍຈ່າຍອື່ນໆໃນການດຳເນີນງານ	(75.599)	740	(74.859)
ລາຍຈ່າຍທັງໝົດໃນການດຳເນີນງານ	**(267.839)**	**2.425**	**(265.414)**
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນບໍລິສັດຮຸ້ນສ່ວນ	24.189	1.812	26.001
ກຳໄລກ່ອນອາກອນ	**330.356**	**(811)**	**329.545**
ລາຍຈ່າຍອາກອນກຳໄລ	(72.601)	600	(72.001)
ກຳໄລສຸດທິພາຍໃນໄລຍະ	**257.755**	**(211)**	**257.544**
ກຳໄລ ຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	1.237		1.240

5. ການປັບປຸງຄືນຂອງປີຜ່ານມາ (ຕໍ່)

ຕາຕະລາງຕໍ່ໄປນີ້ສະແດງລາຍການໃນເອກະສານລາຍງານການເງິນທີ່ຖືກກະທົບ ສຳລັບ ແຕ່ລະລາຍການ.

	ໃນວັນທີ 31 ທັນວາ 2019		
	ສະແດງໃນເບື້ອງຕົ້ນ ລ້ານກີບ	ເພີ່ມຂຶ້ນ/(ຫຼຸດລົງ) ລ້ານກີບ	ປັບປຸງຄືນ ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	9.202.051	11.319.688	9.202.045
ເງິນຝາກຢູ່ທະນາຄານອື່ນ	4.588.321	3.927.847	4.493.536
ເງິນກູ້ໃຫ້ແກ່ລູກຄ້າ	27.490.492	29.079.992	27.490.492
ຊັບສິນທາງດ້ານການເງິນ - ປະເພດມີໄວ້ເພື່ອການຄ້າ	19	(19)	-
ຊັບສິນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	133.930	93.574	129.623
ເງິນລົງທຶນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	3.453.937	3.363.383	3.453.937
ເງິນລົງທຶນໃນບໍລິສັດຮ່ວມ ທີ່ບັນທຶກໂດຍວິທີສ່ວນໄດ້ເສຍ -ສຸດທິ	494.666	580.966	568.897
ຊັບສິນບັດຖຶທີ່ ແລະ ອຸປະກອນ	456.259	440.038	455.721
ສິດໃນການນຳໃຊ້ຊັບສິນ	245.069	55.108	54.814
ຊັບສິນບັດຖຶທີ່ບໍ່ມີຕົວຕົນ	55.194	244.529	245.042
ຊັບສິນອາກອນລໍຖ້າຊຳລະສະສາງ	34.644	11.578	28.768
ຊັບສິນອື່ນໆ	472.122	551.450	471.430
ລວມຊັບສິນ	**46.626.704**	**49.668.153**	**46.594.305**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	4.061.775	4.004.350	4.063.635
ໜີ້ຕ້ອງສົ່ງລູກຄ້າ	36.419.928	39.989.216	36.419.928
ເງິນກູ້ຢືມຈາກທະນາຄານອື່ນ	3.705.378	3.029.485	3.705.378
ໜີ້ສິນຕາມສັນຍາເຊົ່າ	41.636	14.232	14.249
ອາກອນຄ້າງຊຳລະ	-	33.247	41.309
ໜີ້ສິນອື່ນໆ	228.301	583.996	210.577
ລວມໜີ້ສິນ	**44.457.018**	**47.654.526**	**44.455.076**
ທຶນ			
ທຶນຈົດທະບຽນ	1.038.617	1.038.617	1.038.617
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	605.993	753.399	604.423
ການວັດມູນຄ່າຄືນໃໝ່ຂອງສ່ວນຜົນປະໂຫຍດຫຼັງออกการ	15.897	10.618	12.082
ກຳໄລສະສົມ	477.452	210.993	484.107
ລວມທຶນ	**2.137.959**	**2.013.627**	**2.139.229**
ລວມໜີ້ສິນ ແລະ ທຶນ	**31.727**	**49.668.153**	**46.594.305**

	ໃນວັນທີ 30 ມິຖຸນາ 2019		
	ສະແດງໃນເບື້ອງຕົ້ນ ລ້ານກີບ	ເພີ່ມຂຶ້ນ/(ຫຼຸດລົງ) ລ້ານກີບ	ປັບປຸງຄືນ ລ້ານກີບ
ໃນລາຍງານກະແສເງິນສົດ			
ກິດຈະກຳການດຳເນີນງານ	2.120.934	849.444	2.970.378
ກິດຈະກຳການລົງທຶນ	(37.911)	1.277	(36.634)
ກິດຈະກຳທາງການເງິນ	(205.926)	71	(205.855)
ເພີ່ມຂຶ້ນ ສຸດທິ ຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ	1.877.097	850.792	2.727.889
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນໄລຍະ	7.204.432	(2.663)	7.201.769
ເງິນສົດ ແລະ ລາຍທຽບເທົ່າເງິນສົດທ້າຍໄລຍະ	9.081.529	848.129	9.929.658

6. ລາຍຮັບດອກເບັຍສຸດທິ ແລະ ລາຍຮັບທີ່ຄ້າຍຄືກັນ

	ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ	ປັບປຸງຄືນ 30 ມິຖຸນາ 2019 ລ້ານກີບ
ລາຍຮັບດອກເບັຍ:		
ລາຍຮັບດອກເບັຍການໃຫ້ກູ້ຍືມ	1.094.132	960.957
ລາຍຮັບດອກເບັຍເງິນຝາກຢູ່ທະນາຄານອື່ນ	27.374	31.990
ລາຍຮັບດອກເບັຍຈາກການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	81.330	82.610
ລາຍຮັບດອກເບັຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ	26	85
	1.202.862	**1.075.642**
ລາຍຈ່າຍດອກເບັຍ:		
ລາຍຈ່າຍດອກເບັຍເງິນຝາກຂອງທະນາຄານອື່ນ	(106.584)	(145.752)
ລາຍຈ່າຍດອກເບັຍເງິນຝາກຂອງລູກຄ້າ	(528.821)	(431.941)
	(635.405)	**(577.693)**
ລາຍຮັບສຸດທິຈາກດອກເບັຍ ແລະ ລາຍຮັບທີ່ຄ້າຍຄືກັນ	**567.457**	**497.949**

7. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ	ປັບປຸງຄືນ 30 ມິຖຸນາ 2019 ລ້ານກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	96.414	86.922
ທຸລະກຳທາງດ້ານສິນເຊື່ອ	13.904	23.244
ທຸລະກຳທາງອື່ນໆ	14.440	9.825
	124.758	**119.991**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(12.033)	(11.993)
ທຸລະກຳທາງອື່ນໆ	(1.700)	(1.955)
	(13.733)	**(13.948)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**111.025**	**106.043**

8. ລາຍຈ່າຍອື່ນໆໃນການດຳເນີນງານ

	ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ	ປັບປຸງຄືນ 30 ມິຖຸນາ 2019 ລ້ານກີບ
ຄ່າເບັຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	22.897	14.642
ອື່ນໆ	54.462	60.217
	77.359	**74.859**

9. ກຳໄລຕໍ່ຮຸ້ນ

ການຄິດໄລ່ກຳໄລພື້ນຖານຕໍ່ຮຸ້ນໃນວັນທີ 30 ມິຖຸນາ 2020 ແລະ 2019 ແມ່ນອີງໃສ່ ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງທະນາຄານໃນໄລຍະ ແລະ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນໄລຍະດັ່ງຕໍ່ໄປນີ້:

	ທົບທວນຄືນ 30 ມິຖຸນາ 2020	ປັບປຸງຄືນ 30 ມິຖຸນາ 2019
ກຳໄລສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ (ລ້ານກີບ)	44.741	257.544
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບກຳໄລພື້ນຖານຕໍ່ຮຸ້ນ (ຮຸ້ນ)	207.723.300	207.723.300
ກຳໄລຕໍ່ຮຸ້ນ (ກີບ)	215	1.240

10. ເງິນຝາກຢູ່ທະນາຄານອື່ນ

	ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ	ປັບປຸງຄືນ 31 ທັນວາ 2019 ລ້ານກີບ
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**3.111.056**	**3.919.881**
- ເປັນເງິນກີບ	7.965	23
- ເປັນເງິນຕາຕ່າງປະເທດ	3.103.091	3.919.858
ເງິນຝາກມີກຳນົດ	**816.791**	**573.655**
- ເປັນເງິນກີບ	193.778	219.775
- ເປັນເງິນຕາຕ່າງປະເທດ	623.013	353.880
	3.927.847	**4.493.536**

ອັດຕາດອກເບ້ຍສຳລັບເງິນຝາກຢູ່ທະນາຄານອື່ນພາຍໃນໄລຍະມີດັ່ງນີ້ :

	30 ມິຖຸນາ 2020 % ຕໍ່ປີ	31 ທັນວາ 2019 % ຕໍ່ປີ
ເງິນຝາກກະແສລາຍວັນ	0,07 - 1,10	0,00 - 3,10
ເງິນຝາກປະຢັດ	0,07 - 2,16	0,00 - 0,80
ເງິນຝາກມີກຳນົດ	0,15 - 6,36	0,50 - 4,95

11. ເງິນກູ້ໃຫ້ແກ່ລູກຄ້າ

	ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ	ກວດສອບ 31 ທັນວາ 2019 ລ້ານກີບ
ເງິນກູ້ໃຫ້ແກ່ລູກຄ້າທັງໝົດ	30.087.656	28.141.033
ເງິນກູ້ທີ່ໄດ້ຮັບທຶນຈາກການກູ້ຢືມເງິນຈາກ ທຫລ (ບົດອະທິບາຍຂໍ້ທີ 19)	1.875.748	1.825.039
ຫັກ: ເງິນສະຮອງທຶນຈາກການເສື່ອມຄ່າ	(1.007.664)	(650.541)
	29.079.992	**27.490.492**

11. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

ສ່ວນປ່ຽນແປງໃນເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ພາຍໃນຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2020 ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2020 - ກວດສອບ	**650.541**
ປ່ຽນແປງສຸດທິພາຍໃນໄລຍະ	363.063
ສະສາງໜີ້ຕ້ອງຮັບທວງຍາກ	(5.940)
ຍອດເຫຼືອ ໃນວັນທີ 30 ມິຖຸນາ 2020 - ທົບທວນຄືນ	**1.007.664**

ລາຍລະອຽດເງິນແຮສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ໃນວັນທີ 30 ມິຖຸນາ 2020 ມີດັ່ງລຸ່ມນີ້:

	30 ມິຖຸນາ 2020		31 ທັນວາ 2019	
	ຍອດເຫຼືອທ້າຍ ລ້ານກີບ	ຄ່າເສື່ອມ ລ້ານກີບ	ຍອດເຫຼືອທ້າຍ ລ້ານກີບ	ຄ່າເສື່ອມ ລ້ານກີບ
ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ	5.533.603	792.211	4.008.282	401.513
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	22.678.958	215.453	22.979.708	249.028
	28.212.561	**1.007.664**	**26.987.990**	**650.541**

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະ ມີດັ່ງລຸ່ມນີ້:

	30 ມິຖຸນາ 2020 % ຕໍ່ປີ	31 ທັນວາ 2019 % ຕໍ່ປີ
ເງິນກູ້ເປັນເງິນ ກີບ	6,00 - 16,00	6,00 - 16,00
ເງິນກູ້ເປັນເງິນ ໂດລາ	5,41 - 10,00	5,80 - 16,00
ເງິນກູ້ເປັນເງິນ ບາດ	6,00 - 16,00	6,00 - 10,00

ເງິນກູ້ແບ່ງຕາມສະກຸນເງິນ:

	ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ	ກວດສອບ 31 ທັນວາ 2019 ລ້ານກີບ
ເງິນກູ້ເປັນເງິນ ກີບ	13.289.504	12.649.118
ເງິນກູ້ເປັນເງິນ ໂດລາ	13.157.871	12.054.073
ເງິນກູ້ເປັນເງິນ ບາດ	3.640.281	3.437.842
	30.087.656	**28.141.033**

11. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

ເງິນກູ້ແບ່ງຕາມມື້ຄົບກຳນົດເດີມ:

	ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ	ກວດສອບ 31 ທັນວາ 2019 ລ້ານກີບ
ເງິນກູ້ໄລຍະສັ້ນ	2.086.354	1.581.901
ເງິນກູ້ໄລຍະກາງ	17.147.602	16.311.131
ເງິນກູ້ໄລຍະຍາວ	10.853.700	10.248.001
	30.087.656	**28.141.033**

12. ຊັບສິນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ

ທະນາຄານ ມີການລົງທຶນໃນຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ. ບໍລິສັດ ຜະລິດ-ໄຟຟ້າລາວ ແມ່ນບໍລິສັດທີ່ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ໃນວັນທີ 30 ມິຖຸນາ 2020, ຮຸ້ນມີມູນຄ່າຍຸຕິທຳ ແມ່ນ 93.574 ລ້ານກີບ.

